ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ເຜີຍແຜ່ນະໂຍບາຍພັດທະນາເສດຖະກິດໄຊສົມບູນ




ໃນວັນທີ 20 ພະຈິກ 2020; ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ເຜີຍແຜ່ແຜນນະໂຍບາຍການພັດທະນາແຂວງໄຊສົມບູນທີ່ສະຖາບັນການທະນາຄານ ນະຄອນຫຼວງວຽງຈັນ. ໂດຍການໃຫ້ກຽດເຜີຍແຜ່ຂອງ ທ່ານ ນາງ ວັດທະນາ ດາລາລອຍ ກຳມະການປະຈຳພັກ, ຮອງຜູ້ວ່າການ ທຫລ, ຫົວໜ້າໜ້າຄະນະຊີ້ນຳກອງທຶນພັດທະນາແຂວງໄຊສົມບູນ, ຊຶ່ງມີຜູ້ເຂົ້າຮ່ວມຈາກບັນດາກົມພາຍໃນ ທຫລ, ທະນາຄານທຸລະກິດລັດ, ລັດຮຸ້ນສ່ວນ, ທະນາຄານເອກະຊົນ ແລະ ທະນາຄານສາຂາຕ່າງປະເທດ.

ການເຜີຍແຜ່ໃນຄັ້ງນີ້ ປະກອບມີ ມະຕິຂອງກົມການເມືອງສູນກາງພັກວ່າດ້ວຍການຮັບຮອງເອົາຍຸດທະສາດການພັດທະນາເຂດຈຸດສຸມໃຈກາງແຂວງໄຊສົມບູນ, ແນວຄິດ-ຍຸດທະສາດການພັດທະນາເຂດຈຸດສຸມໃຈກາງແຂວງໄຊສົມບູນ, ດຳລັດວ່າດ້ວຍນະໂຍບາຍການພັດທະນາເສດຖະກິດແຂວງໄຊສົມບູນ ແລະ ມະຕິກອງປະຊຸມຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍ ທີ່ພົວພັນກັບດຳລັດວ່າດ້ວຍນະໂຍບາຍການພັດທະນາເສດຖະກິດແຂວງໄຊສົມບູນ ເຊິ່ງທ່ານຮອງຜູ້ວ່າການ ທຫລ ໄດ້ນຳສະເໜີແຕ່ລະເນື້ອໃນຂອງເອກະສານຢ່າງລະອຽດ, ຈະແຈ້ງ ແລະ ຄົບຖ້ວນ.





ພ້ອມດຽວກັນນີ້; ທ່ານ ສີສຸພັນ ໂພໄຊສີ ໄດ້ນຳສະເໜີຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງທຶນພັດທະນາໄຊສົມບູນ ໃນນັ້ນ, ມີບັນດານິຕິກຳຂອງກົມການເມືອງສູນກາງພັກໂດຍສະເພາະມະຕິຕົກລົງ ເລກທີ 25/ກມສພ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳການພັດທະນາຈຸດສຸມໃຈກາງ, ມະຕິ ເລກທີ 055/ກມສພ ວ່າດ້ວຍການຮັບຮອງເອົາຍຸດທະສາດການພັດທະນາຈຸດສຸມໃຈກາງ ແຂວງໄຊສົມບູນ, ຂໍ້ຕົກລົງ ເລກທີ 01/ຄຊຈກ ວ່າດ້ວຍການແຕ່ງຕັ້ງຄະນະຊ່ວຍວຽກຄະນະຮັບຜິດຊອບການພັດທະນາເຂດຈຸດສຸມໃຈກາງ, ແນວຄິດ-ຍຸດທະສາດການພັດທະນາເຂດຈຸດສຸມໃຈກາງແຂວງໄຊສົມບູນແນວຄິດ ເລກທີ 01/ຄສຈກ , ມະຕິຂອງຄະນະປະຈຳສະພາແຫ່ງຊາດ ເລກທີ 16/ຄປຈ ວ່າດ້ວຍການຍົກເວັ້ນການປະຕິບັດກົດໝາຍ ຂອງດຳລັດ 414, ດຳລັດ ເລກທີ 414/ລບ ວ່າດ້ວຍນະໂຍບາຍການພັດທະນາເສດຖະກິດແຂວງໄຊສົມບູນ, ຂໍ້ຕົກລົງເລກທີ 01/ຄສຈກ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກອງທຶນພັດທະນາໄຊສົມບູນ; ພ້ອມນັ້ນ, ຍັງມີແຜນຍຸດທະສາດໃນການພັດທະນາແຂວງໄຊສົມບູນ ເປັນຕົ້ນແຜນສ້າງແຂວງໄຊສົມບູນໃຫ້ກາຍເປັນແນວຫຼັງຍຸດທະສາດ, ເປັນພື້ນຖານການປະຕິວັດໃນໄລຍະໃໝ່, ເປັນໃຈກາງເສດຖະກິດສີຂຽວ, ເປັນເຂດທ່ອງທ່ຽວທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ, ສ້າງໃຫ້ແຂວງໄຊສົມບູນຖືເອົາການຫັນເປັນອຸດສະຫະກຳໃນ 5 ຂະແໜງການໃນນີ້ແມ່ນຂະແໜງການກະສິກຳ-ປ່າໄມ້, ການທ່ອງທ່ຽວ, ພະລັງງານໄຟຟ້າ, ບໍ່ແຮ່ ແລະ ບໍລິການເຊື່ອມຈອດ-ເຊື່ອມໂຍງ ແລະ ສ້າງໃຫ້ແຂວງໄຊສົມບູນພັດທະນາແບບຍືນຍົງ - ສີຂຽວ ແລະ ການຮັກສາສະພາບແວດລ້ອມ.




**# ຂ່າວ-ພາບ: ສົມອົກ ເຄນຄຳແພງ**

# ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ